ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ: 11363/ກພສ

ນະຄອນຫຼວງວຽງຈັນ, ວັນທີ:08 ພະຈິກ 2023

# ແຈ້ງການ

ເຖິງ: - ຫົວໜ້າພາສີປະຈຳ ແຂວງບໍລິຄຳໄຊ;

- ຫົວໜ້າດ່ານພາສີສາກົນປາກຊັນ;
- ຫົວໜ້າດ່ານພາສີສາກົນນ້ຳພາວ.

ເລື່ອງ: ການຈັດຕັ້ງປະຕິບັດນຳໃຊ້ລະບົບ ການແຈ້ງພາສີແບບເອເລັກໂຕຣນິກ NSWA+, ການນຳໃຊ້ລາຍເຊັນເອເລັກໂຕຣນິກ ແລະ ການຊຳລະສະສາງຜ່ານ Finlink.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021;
- ອີງຕາມຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 3009/ກງ, ລົງວັນທີ 27 ກັນຍາ 2022 ວ່າດ້ວຍການນຳໃຊ້ລະບົບເອເລັກໂຕຣນິກ NSWA+ ເຂົ້າໃນຄຸ້ມຄອງການແຈ້ງພາສີ;
- ອີງຕາມ ຄຳແນະນຳຂອງລັດຖະມົນຕີ ກະຊວງການເງິນ ກ່ຽວກັບການແຈ້ງພາສີດ້ວຍລະບົບ NSWA+ ສະບັບເລກທີ 3011/ກງ, ລົງວັນທີ 27 ຕຸລາ 2022;
- ອີງຕາມ ຂໍ້ຕົກລົງຂອງກົມພາສີ ສະບັບເລກທີ 2434/ກພສ, ລົງວັນທີ 09 ສິງຫາ 2023 ວ່າດ້ວຍແຜນການຜັນຂະຫາຍາຍ ແລະ ຝຶກນຳໃຊ້ລະບົບ NSWA+ ຂອງກົມພາສີຢູ່ດ່ານພາສີສາກົນເປົ້າໝາຍໃນຂອບເຂດທົ່ວປະເທດ;
- ອີງຕາມ ແຜນຜັນຂະຫຍາຍ ແລະ ຝຶກອົບຮົມນຳໃຊ້ລະບົບການແຈ້ງພາສີ NSWA+ ໄປຍັງດ່ານພາສີສາກົນໃນຂອບເຂດທົ່ວປະເທດ ສະບັບເລກທີ 08220/ກພສ, ລົງວັນທີ 07 ກັນຍາ 2023.

ເພື່ອຮັບປະກັນ ໃຫ້ການນຳໃຊ້ລະບົບການແຈ້ງພາສີແບບເອເລັກໂຕຣນິກ ຢູ່ ດ່ານພາສີສາກົນປາກຊັນ, ດ່ານພາສີສາກົນນ້ຳພາວ, ໂດຍສອດຄ່ອງກັບລະບຽບການ ແລະ ນຳໃຊ້ລະບົບດັ່ງກ່າວໄດ້ຢ່າງມີປະສິດທິພາບ, ຄ່ອງຕົວ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດ.

**ກົມພາສີ ອອກແຈ້ງການ ດັ່ງນີ້ :**

1. ຜູ້ປະກອບການທີ່ໄດ້ດຳເນີນກິດຈະການເປັນຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີທີ່ມີຈຸດປະສົງໃນການນຳເຂົ້າ-ສົ່ງອອກ ຜ່ານດ່ານພາສີສາກົນ ດ່ານພາສີສາກົນປາກຊັນ, ດ່ານພາສີສາກົນນ້ຳພາວ ແມ່ນໃຫ້ນຳໃຊ້ລະ-ບົບການແຈ້ງພາສີແບບເອເລັກໂຕຣນິກ NSWA+ ໂດຍຈະດຳເນີນການປະກອບເອກສານໃບແຈ້ງພາສີເປັນ

ລາຍລະອຽດຜ່ານລະບົບ ແລະ ແບບເອກະສານປະກອບເຂົ້າລະບົບທັງໝົດ ເລີ່ມແຕ່ **ວັນທີ 09 ພະຈິກ 2023** ເປັນຕົ້ນໄປ;

2. ຂັ້ນຕອນ ແລະ ວິທີການ ໃນການປະກອບໃບແຈ້ງພາສີເປັນລາຍລະອຽດ ເຂົ້າໃນລະບົບການແຈ້ງພາສີເອເລັກໂຕຣນິກ NSWA+ ແມ່ນໃຫ້ປະຕິບັດຕາມຄໍາແນະນໍາຂອງກະຊວງການເງິນ ສະບັບເລກທີ 3011/ກງ, ລົງວັນທີ 27 ກັນຍາ 2022, ວ່າດ້ວຍການແຈ້ງພາສີດ້ວຍລະບົບເອເລັກໂຕຣນິກ NSWA+;
   - ສໍາລັບ ຂັ້ນຕອນການກວດປ່ອຍສິນຄ້າ : ແມ່ນໃຫ້ດໍາເນີນການນໍາໃຊ້ ໃບບັນທຶກກວດປ່ອຍ ໃນການບັນທຶກການກວດກາສິນຄ້າ ແລະ ບັນທຶກລົງລະບົບ ASYCUDA/NSWA+.
3. ຂັ້ນຕອນ ແລະ ວິທີການລົງລາຍເຊັນເອເລັກໂຕຣນິກ ແມ່ນໃຫ້ປະຕິບັດຕາມຄໍາແນະນໍາຊົ່ວຄາວ ຂອງກະຊວງການເງິນ ສະບັບເລກທີ 3480/ກງ, ລົງວັນທີ 07 ພະຈິກ 2022, ວ່າດ້ວຍການນໍາໃຊ້ລາຍເຊັນເອເລັກໂຕນິກເຂົ້າໃນລະບົບຄຸ້ມຄອງລາຍຮັບງົບປະມານແຫ່ງລັດ;
4. ການຊໍາລະຄ່າພາສີ-ອາກອນ ແລະ ພັນທະອື່ນ ແມ່ນໃຫ້ຊໍາລະຜ່ານລະບົບການຊໍາລະແບບລວມສູນຂອງກະຊວງການເງິນ Finlink ທີ່ສາມາດຊໍາລະຜ່ານບັນດາທະນາຄານທຸລະກິດທີ່ຂຶ້ນກັບ;
5. ມອບໃຫ້ພາສີປະຈໍາ ແຂວງບໍລິຄໍາໄຊ ຊີ້ນໍາດ່ານພາສີສາກົນ ດ່ານພາສີສາກົນປາກຊັນ, ດ່ານພາສີສາກົນນໍ້າພາວ , ເພື່ອຮັບຜິດຊອບ ໃນການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ນໍາໃຊ້ ລະບົບ NSWA+, ພ້ອມທັງປະສານສົມທົບກັບຄະນະຮັບຜິດຊອບຂອງ ກົມພາສີ ແລະ ຂະແໜງການກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ. ພ້ອມນັ້ນ ກໍໃຫ້ອອກແຈ້ງການ ຫຼື ເຜີຍແຜ່ ໃຫ້ ແກ່ຜູ້ປະກອບການ ເພື່ອຮັບຊາບ ແລະ ດໍາເນີນການຂຶ້ນທະບຽນລາຍເຊັນເອເລັກໂຕນິກ ໂດຍໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ;
6. ມອບໃຫ້ ພາສີປະຈໍາ ແຂວງບໍລິຄໍາໄຊ ຊີ້ນໍາດ່ານພາສີສາກົນ ດ່ານພາສີສາກົນປາກຊັນ, ດ່ານພາສີສາກົນນໍ້າພາວ , ຄັງເງິນແຫ່ງຊາດປະຈໍາແຂວງບໍລິຄໍາໄຊ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ສໍາເລັດເປັນຢ່າງດີ;
7. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຄວາມຫຍຸ້ງຍາກ ຫຼື ບັນຫາ, ໃຫ້ສັງລວມລາຍງານຂໍທິດຊີ້ນໍາຈາກກົມພາສີ ເພື່ອດໍາເນີນການ ແກ້ໄຂທັນສະພາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມພາສີ**



ບ່ອນນໍາສົ່ງ:

- ພະແນກການເງິນແຂວງບໍລິຄໍາໄຊ — 01 ສະບັບ ເພື່ອຊາບ;
- ຄັງເງິນແຫ່ງຊາດປະຈໍາຂວງບໍລິຄໍາໄຊ — 01 ສະບັບ ເພື່ອຊາບ ແລະ ປະສານສົມທົບ;
- ຫ້ອງການພາສີປະຈໍາ ແຂວງບໍລິຄໍາໄຊ — 01 ສະບັບ ເພື່ອຈັດຕັ້ງປະຕິບັດ;
- ພະແນກອ້ອມຂ້າງກົມພາສີ — 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.
- ທະນາຄານທີ່ດໍາເນີນການຊໍາລະຄ່າພາສີ-ອາກອນ — 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.